ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງອຸດສາຫະກຳ ແລະ ການຄ້າ

ເລກທີ 1591 /ອຄ.ກຂອ

ນະຄອນຫຼວງວຽງຈັນ, ວັນທີ 25 ກັນຍາ 2017

# ແຈ້ງການ

ເຖິງ : ທ່ານ ຫົວໜ້າພະແນກ ອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງວຽງຈັນ.

ເລື່ອງ: ເອົາໃຈໃສ່ເພີ່ມທະວີການປະມູນຂາຍໄມ້ຍຶດຂອງລັດ ແລະ ໄມ້ທີ່ຍັງຄ້າງໃຫ້ໄວ.

- ອີງຕາມ ຄຳສັ່ງຂອງ ທ່ານ ນາຍົກລັດຖະມົນຕີ ເລກທີ 15/ນຍ, ລົງວັນທີ 13 ພຶດສະພາ 2016;
- ອີງຕາມ ຄຳສັ່ງແນະນຳ ການຈັດຕັ້ງປະມູນຂາຍໄມ້ທີ່ຍຶດເປັນຂອງລັດ ເລກທີ 0336/ອຄ.ກຂອ ລົງວັນທີ 13 ມີນາ 2017;
- ອີງຕາມຜົນຂອງກອງປະຊຸມລັດຖະບານເປີດກວ້າງ ປີ 2017 ລະຫວ່າງວັນທີ 07-08 ກັນຍາ 2017.

**ລັດຖະມົນຕີ ກະຊວງອຸດສາຫະກຳ ແລະ ການຄ້າ ແຈ້ງມາຍັງ ທ່ານ ເພື່ອປະຕິບັດດັ່ງນີ້:**

1. ໃຫ້ສົມທົບກັບຄະນະປະມູນຂາຍໄມ້ຂອງແຂວງ ຈັດຕັ້ງທາບທາມຂາຍໄມ້ໃຫ້ແກ່ບັນດາບໍລິສັດ/ໂຮງງານທີ່ສົນໃຈຊື້ໄມ້ທີ່ຍັງຄ້າງຂອງແຂວງຕົນ ໂດຍໃຫ້ຄົ້ນຄວ້າຂາຍຕາມຄຸນນະພາບໄມ້ຕົວຈິງ ເພື່ອບໍ່ໃຫ້ໄມ້ທີ່ຍັງຄ້າງຢູ່ສະໜາມ II ແລະ ສະໜາມ III ເຊື່ອມຄຸນນະພາບ ແລະ ຈະຫຼຸດລາຄາລົງໄປກວ່ານີ້;
2. ໃຫ້ຮີບຮ້ອນສົມທົບກັບຄະນະປະມູນຂາຍໄມ້ຍຶດເປັນຂອງລັດຂັ້ນແຂວງ ຈັດຕັ້ງປະມູນຂາຍໄມ້ທີ່ໄດ້ຍຶດມາເປັນຂອງລັດ ທີ່ມີຂໍ້ຕົກລົງຍຶດເປັນຂອງລັດແລ້ວ (ໄມ້ຍຶດໃໝ່ ແລະ ໄມ້ຍຶດເກົ່າ) ທີ່ຍັງຄ້າງຢູ່ນັ້ນ ໃຫ້ສຳເລັດໂດຍໄວ, ແລ້ວສະຫຼຸບລາຍງານຜົນການປະມູນໃຫ້ກະຊວງ (ກົມການນຳເຂົ້າ ແລະ ສົ່ງອອກ) ຊາບຕາມກຳນົດເວລາທີ່ໄດ້ລະບຸໄວ້ໃນຄຳສັ່ງແນະນຳການຈັດຕັ້ງປະມູນຂາຍໄມ້ທີ່ຍຶດເປັນຂອງລັດ ເລກທີ 0336/ອຄ.ກຂອ ລົງວັນທີ 13 ມີນາ 2017, ບໍ່ໃຫ້ລໍຖ້າຄະນະປະມູນຂາຍໄມ້ຂອງສູນກາງອີກ;
3. ໃຫ້ເພີ່ມທະວີເອົາໃຈໃສ່ໃນການຈັດຕັ້ງປະຕິບັດຄຳສັ່ງ ເລກທີ 15/ນຍ, ລົງວັນທີ 13 ພຶດສະພາ 2016 ຢ່າງເຂັ້ມງວດ ແລະ ຮັດກຸມຕື່ມອີກ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງ ທ່ານ ເພື່ອຊາບ ແລະ ຈັດຕັ້ງປະຕິບັດຕາມນີ້ດ້ວຍ.

**ລັດຖະມົນຕີ**

ເຂັມມະນີ ພົນເສນາ

ບ່ອນສົ່ງ

- ທ່ານ ລັດຖະມົນຕີ, ຫົວໜ້າຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ
- ທ່ານ ລັດຖະມົນຕີ, ກະຊວງກະສິກຳ ແລະ ປ່າໄມ້
- ບັນດາທ່ານ ເຈົ້າແຂວງ, ເຈົ້າຄອງນະຄອນຫຼວງວຽງຈັນ
- ບັນດາທ່ານ ຮອງລັດຖະມົນຕີ, ກະຊວງອຸດສາຫະກຳ ແລະ ການຄ້າ